**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ.32../ຄອສພ

ນະຄອນຫຼວງວຽງຈັນ, ລົງວັນທີ.11..ກໍລະກົດ 2025

# ແຈ້ງການ

**ເຖິງ: ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ.**

**ເລື່ອງ: ການປັບປຸງກົງຈັກພາຍໃນ ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.**

- ອີງຕາມ ມະຕິ ຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025;
- ອີງຕາມມະຕິ ກອງປະຊຸມສະພາບແຫ່ງຊາດ ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງ ຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມຄໍາແນະນໍາກ່ຽວກັບການປັບປຸງກົງຈັກການຈັດຕັ້ງ ເລກທີ 465/ຄລສພ, ລົງວັນທີ 27 ມີນາ 2025;
- ອີງຕາມ ທິດທາງການປັບປຸງກົງຈັກການຈັດຕັ້ງຢູ່ທ້ອງຖິ່ນ ຂອງຄະນະຮັບຜິດຊອບປັບປຸງກົງຈັກການຈັດ ຕັ້ງ ຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 302/ຄຈສພ, ລົງວັນທີ 04/07/2025.

ເພື່ອຮັບປະກັນການຈັດຕັ້ງປະຕິບັດການປັບປຸງກົງຈັກການຈັດຕັ້ງ ພາຍໃນຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ໃຫ້ໄປຕາມທິດຊີ້ນໍາຂອງຂັ້ນເທິງ ຢ່າງເຂັ້ມງວດ, ສໍາເລັດທັນຕາມກໍານົດເວລາ. ດັ່ງນັ້ນ, ຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ ຄະນະໂຄສະນາອົບຮົມສູນກາງພັກ ຂໍຖືເປັນກຽດແຈ້ງມາຍັງ ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ( ຄະນະຮັບຜິດຊອບປັບປຸງກົງຈັກຂັ້ນແຂວງ, ນະຄອນຫຼວງ ) ກະກຽມດັ່ງນີ້:

1. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຕາມພາລະບົດບາດໄລຍະຜ່ານມາ ມີດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບົດຮຽນທີ່ຖອດຖອນໄດ້, ພ້ອມທັງຂໍ້ສະເໜີຕ່າງໆ. ການສະຫຼຸບຕີລາຄາຕ້ອງຍົກໃຫ້ເຫັນບັນຫາຕ່າງໆທີ່ເກີດຂຶ້ນຈາກການປະຕິບັດໜ້າທີ່ໃນໄລຍະຜ່ານມາ, ເປັນຕົ້ນແມ່ນໜ້າວຽກທີ່ຍັງຊໍ້າຊ້ອນກັນພາຍໃນຂະແໜງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

2. ເກັບກໍາຈໍານວນໂຄງປະກອບກົງຈັກການຈັດຕັ້ງ, ການຈັດຕັ້ງພັກ, ຈໍານວນພະນັກງານ-ລັດຖະກອນ ຂອງຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ແລະ ຄະນະໂຄສະນາອົບຮົມເມືອງ, ນະຄອນ;

3. ປັບປຸງກົງຈັກການຈັດຕັ້ງ ແລະ ສັບຊ້ອນພະນັກງານລັດຖະກອນຄືນໃໝ່ ພາຍຫຼັງໂອນວຽກງານສື່ມວນຊົນ (ວຽກຖະແຫຼງຂ່າວ) ມາຂຶ້ນກັບຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ, ເມືອງ, ນະຄອນ;

4. ສົມທົບກັບພະແນກວັດທະນະທຳ ແລະ ທ່ອງທ່ຽວຂອງແຂວງ, ນະຄອນຫຼວງ ເກັບກຳຂໍ້ມູນກ່ຽວກັບກົງຈັກການຈັດຕັ້ງ, ບຸກຄະລາກອນ, ການຈັດຕັ້ງພັກພາກສ່ວນສື່ມວນຊົນ ຢູ່ຂັ້ນແຂວງ ແລະ ເມືອງ ທີ່ມາຈະຂຶ້ນກັບຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ແລະ ຄະນະໂຄສະນາອົບຮົມເມືອງ, ນະຄອນ;

5. ມອບໃຫ້ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ແລະ ຄະນະໂຄສະນາອົບຮົມເມືອງ, ນະຄອນ ຮີບຮ້ອນປັບປຸງພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ພາຍຫຼັງໂອນວຽກງານສື່ມວນຊົນ (ວຽກຖະແຫຼງຂ່າວ) ມາຂຶ້ນກັບຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ແລະ ຄະນະໂຄສະນາອົບຮົມເມືອງ, ນະຄອນ ໂດຍອີງໃສ່ທິດທາງລວມ, ໂຄງປະກອບກົງຈັກຕ້ອງກະທັດຮັດ ແຕ່ຕ້ອງມີຄວາມເຂັ້ມແຂງມີປະສິດທິຜົນການປັບປຸງຄື:

1. ໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ບໍ່ໃຫ້ກາຍ 05 ຂະແໜງການ;

2. ໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະໂຄສະນາອົບຮົມເມືອງ, ນະຄອນ ບໍ່ໃຫ້ກາຍ 03 ໜ່ວຍງານ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ຄະນະໂຄສະນາອົບຮົມສູນກາງພັກ

ຄຳພັນ ເຜີຍຍະວົງ